**ຕົວຢ່າງ** ໜ້ານີ້ໃຊ້ສຳລັບອ້າງອີງເທົ່ານັ້ນ.

EDD Employment Development Department
State of California

ໝາຍເລກໂທລະສັບໂທຟຣີຂອງ EDD:

| | |
|---|---|
| ພາສາອັງກິດ | 1-800-300-5616 |
| ພາສາສະເປນ | 1-800-326-8937 |
| ພາສາຈີນກາງ | 1-866-303-0706 |
| ພາສາຫວຽດນາມ | 1-800-547-2058 |
| ພາສາຈີນກວາງຕຸ້ງ | 1-800-547-3506 |
| ບໍລິການຕົນເອງ | 1-866-333-4606 |
| TTY (ບໍ່ມີສຽງ) | 1-800-815-9387 |

ວັນທີສົ່ງຈົດໝາຍ: 00/00/0000

ສຳລັບຫ້ອງການໃຊ້ເທົ່ານັ້ນ: 000000000000

BYB: 00/00/0000

ຊື່ຜູ້ຍື່ນຄຳຮ້ອງ

ທີ່ຢູ່ຂອງຜູ້ຍື່ນຄຳຮ້ອງ

ເມືອງ, ລັດ, ລະຫັດໄປສະນີ

ຫ້ອງການສຳນັກງານປະຈຳພາກ

ທີ່ຢູ່

ເມືອງ, ລັດ, ລະຫັດໄປສະນີ

ທີ່ຢູ່ຫ້ອງການສຳນັກງານປະຈຳພາກ

## ໜັງສືແຈ້ງການກ່ຽວກັບສິດໃນການໄດ້ຮັບເງິນຊ່ວຍເຫຼືອການຫວ່າງງານໃນລະຫວ່າງການອຸທອນຍັງບໍ່ສິ້ນສຸດ

ຈົດໝາຍໂຕ້ຕອບຂອງທ່ານທີ່ປະທັບຕາໄປສະນີ/ທີ່ໄດ້ຮັບໃນວັນທີ 00/00/0000 ກ່ຽວກັບການຕັດສິນໃຈທີ່ຜ່ານມາຂອງພະແນກແມ່ນໄດ້ຮັບຊາບແລ້ວ. ໄດ້ມີການທົບທວນການຕັດສິນໃຈຢ່າງຮອບຄອບແລ້ວ ແລະເບິ່ງຄືວ່າຖືກຕ້ອງ. ການອຸທອນໄດ້ຮັບການດຳເນີນການແລ້ວ ແລະໄດ້ຖືກສົ່ງຕໍ່ໄປທີ່ຫ້ອງການອຸທອນ XXXX ໝາຍເລກໂທລະສັບ 000-000-0000.

ແບບຟອມຮ້ອງຂໍເງິນຊ່ວຍເຫຼືອການປະກັນການຫວ່າງງານ (UI) ສຳລັບອາທິດສິ້ນສຸດວັນທີ 00/00/0000 ກຳລັງຈະຖືກສົ່ງໃຫ້ທາງໄປສະນີໃນຊອງຈົດໝາຍແຍກຕ່າງຫາກ.
ທ່ານມີສິດທີ່ຈະໄດ້ຮັບເງິນຊ່ວຍເຫຼືອການຫວ່າງງານໃນລະຫວ່າງການອຸທອນຍັງບໍ່ສິ້ນສຸດ.
ເຖິງແມ່ນວ່າທ່ານຈະບໍ່ຕ້ອງການທີ່ຈະໄດ້ຮັບເງິນຊ່ວຍເຫຼືອການຫວ່າງງານ ທ່ານກໍ່ຄວນສືບຕໍ່ຢັ້ງຢືນສິດປະໂຫຍດໃນແຕ່ລະອາທິດທີ່ທ່ານຫວ່າງງານ ຈົນກວ່າທ່ານຈະໄດ້ຮັບຄຳຕັດສິນຈາກຜູ້ພິພາກສາສານປົກຄອງ.

ຖ້າທ່ານເລືອກທີ່ຈະຮັບເງິນຊ່ວຍເຫຼືອການຫວ່າງງານໃນລະຫວ່າງທີ່ລໍຖ້າການໄຕ່ສວນຄຳອຸທອນ ທາງພະແນກຈະຈ່າຍເງິນຊ່ວຍເຫຼືອການຫວ່າງງານໃຫ້ທ່ານຖ້າທ່ານມີສິດທີ່ຈະໄດ້ຮັບ.
ຖ້າຜູ້ພິພາກສາຕັດສິນຢືນຢັນການຕັດສິນໃຈຂອງພະແນກ ທ່ານອາດຈະຕ້ອງຈ່າຍຄືນເງິນຊ່ວຍເຫຼືອການຫວ່າງງານທີ່ທ່ານໄດ້ຮັບ.

ຖ້າທ່ານເລືອກທີ່ຈະຮັບເງິນຊ່ວຍເຫຼືອການຫວ່າງງານໃນລະຫວ່າງທີ່ລໍຖ້າການໄຕ່ສວນຄຳອຸທອນ ແລະຖ້າຜູ້ພິພາກສາຕັດສິນຄືນການຕັດສິນໃຈຂອງພະແນກ ແລະວິນິດໄສວ່າທ່ານມີສິດ ທ່ານຈະໄດ້ຮັບເງິນຊ່ວຍເຫຼືອການຫວ່າງງານສຳລັບອາທິດທີ່ທ່ານໄດ້ຍື່ນແບບຟອມຄຳຮ້ອງຂໍ ແລະມີຄຸນສົມບັດຄົບຕາມເກນອື່ນໆທີ່ກຳນົດທັງໝົດ.

ຫ້ອງການອຸທອນຈະສົ່ງໜັງສືແຈ້ງການເຖິງທ່ານທີ່ລະບຸວັນທີ, ເວລາ ແລະສະຖານທີ່ໃນການໄຕ່ສວນ.
ທ່ານຄວນພະຍາຍາມຢ່າງເຕັມທີ່ເພື່ອເຂົ້າຮ່ວມການໄຕ່ສວນ ເນື່ອງຈາກຜູ້ພິພາກສາຈະອີງຄຳຕັດສິນໃສ່ຄຳໃຫ້ການດ້ວຍວາຈາ ແລະຫຼັກຖານທີ່ເປັນລາຍລັກອັກສອນໃນການໄຕ່ສວນ. ໃນລະຫວ່າງການໄຕ່ສວນ ທ່ານຈະໄດ້ຮັບອະນຸຍາດໃຫ້ອະທິບາຍຂໍ້ເທັດຈິງ ແລະສະເໜີຫຼັກຖານເພື່ອສະໜັບສະໜູນຄະດີຂອງທ່ານ.

ກະລຸນາລະບຸການຕັດສິນໃຈຂອງທ່ານຂ້າງລຸ່ມໂດຍໝາຍທີ່ກ່ອງທີ່ເໝາະສົມ. ທ່ານຕ້ອງເຊັນຊື່, ໃສ່ວັນທີ ແລະສົ່ງແບບຟອມນີ້ກັບຄືນ.

☐ ຂ້າພະເຈົ້າຕ້ອງການໃຫ້ພະແນກຈ່າຍເງິນຊ່ວຍເຫຼືອການຫວ່າງງານໃຫ້ແກ່ຂ້າພເຈົ້າໃນລະຫວ່າງໄລຍະເວລາການອຸທອນນີ້. ຖ້າຄຳຕັດສິນໃນການອຸທອນແມ່ນບໍ່ເປັນໄປຕາມຄຳຮ້ອງຂໍຂອງຂ້າພະເຈົ້າ ຂ້າພະເຈົ້າເຂົ້າໃຈດີວ່າຂ້າພະເຈົ້າອາດຈະຕ້ອງຮັບຜິດຊອບໃນການຈ່າຍເງິນຊ່ວຍເຫຼືອດັ່ງກ່າວຄືນ.

☐ ຂ້າພະເຈົ້າເຂົ້າໃຈດີວ່າຂ້າພະເຈົ້າມີສິດໃນການໄດ້ຮັບເງິນຊ່ວຍເຫຼືອການຫວ່າງງານໃນລະຫວ່າງໄລຍະເວລາການອຸທອນ ແຕ່ຂ້າພະເຈົ້າຕ້ອງການໃຫ້ລະງັບການຈ່າຍເງິນຊ່ວຍເຫຼືອຂອງຂ້າພະເຈົ້າໃນລະຫວ່າງທີ່ລໍຖ້າຜົນການອຸທອນ.

ລາຍເຊັນຂອງຜູ້ຍື່ນຄຳຮ້ອງ

00/00/0000
ວັນທີເຊັນຊື່

ເມື່ອທ່ານໄດ້ກອກແລະເຊັນຊື່ໃນແບບຟອມນີ້ແລ້ວ
ໃຫ້ສົ່ງແບບຟອມກັບຄືນໄປທີ່ຫ້ອງການຂອງພວກເຮົາໂດຍທັນທີໃນຊອງຈົດໝາຍທີ່ຄັດຕິດມາພ້ອມນີ້.